ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

ເລກທີ 3109 /ກລປ

ນະຄອນຫລວງວຽງຈັນ, ວັນທີ 13 DEC 2021

**ຄຳແນະນຳ**

**ກ່ຽວກັບການຈັດຕັ້ງປະຕິບັດໂຄງການຍົກລະດັບການຜະລິດ ແລະ ການສະໜອງຊີ້ນໝູ ຂອງ ສປປ ລາວ**

ເຖິງ: ທ່ານ ຫົວໜ້າຂະແໜງ ລ້ຽງສັດ ແລະ ການປະມົງ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ;

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການ ເຄື່ອນໄຫວຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 3824/ກປ, ລົງວັນທີ 18 ສິງຫາ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ໂຄງການ ຍົກລະດັບການຜະລິດ ແລະ ການສະໜອງຊີ້ນໝູ ຂອງ ສປປ ລາວ ສະບັບເລກທີ 1296/ກປ., ລົງວັນທີ 18 ຕຸລາ 2021.

ເພື່ອເຮັດໃຫ້ ການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ໃນການສົ່ງເສີມການຜະລິດພາຍໃນ ທົດແທນການນຳເຂົ້າໃຫ້ມີປະສິດຜົນ ແລະ ເປັນຮູບປະທຳ, ກົມລ້ຽງສັດ ແລະ ການປະມົງ ໄດ້ສ້າງໂຄງການຍົກລະດັບການຜະລິດ ແລະ ການສະ ໜອງຊີ້ນໝູ ຂອງ ສປປ ລາວ ຂຶ້ນ ເພື່ອແນ່ໃສ່ ການເພີ່ມແມ່ພັນໝູ ເພື່ອຜະລິດໝູຊີ້ນໃຫ້ສາມາດຕອບສະໜອງການບໍລິໂພກພາຍໃນໃຫ້ເພີ່ມຂຶ້ນ 31% ຫລື ຈາກ 510.400 ໂຕ/ປີ ໃນປະຈຸບັນມາເປັນ 825.000 ໂຕ/ປີ ຕອບສະໜອງໄດ້ພຽງພໍຕາມຄວາມຕ້ອງການບໍລິໂພກພາຍໃນ ທົດແທນການນຳເຂົ້າຈາກຕ່າງປະເທດ. ໃນນີ້, ໂຄງການດັ່ງກ່າວ ໄດ້ກຳນົດ 3 ວຽກຈຸດສຸມເພື່ອໃຫ້ຜູ້ປະກອບການ ຫຼືນັກລົງທຶນຜູ້ທີ່ສົນໃຈ ເຂົ້າຮ່ວມ ຄື: 1) ສ້າງຟາມໝູພໍ່-ແມ່ພັນ 12.000 ແມ່ ເພື່ອຜະລິດລູກ 264.000 ໂຕ/ປີ, 2) ສ້າງ ແລະ ຂະຫຍາຍຟາມລ້ຽງໝູຊີ້ນຢ່າງໜ້ອຍ 89 ຟາມ ທີ່ມີຂະໜາດ 3.000 ໂຕຂຶ້ນໄປໃນບັນດາແຂວງທີ່ມີເງື່ອນໄຂ, ທ່າແຮງໃນທົ່ວປະເທດ ແລະ 3) ປັບປຸງໂຮງຂ້າໝູ ແລະ ສ້າງສາງເຢັນ ທີ່ມີຂະໜາດຂອງການຂ້າ 50 ຕໍ່ຮອບ ຫຼື ຂ້າໄດ້ປະມານ 150 ຕໍ່ມື້ໃຫ້ໄດ້ 6 ແຫ່ງ. ສະນັ້ນເພື່ອເຮັດໃຫ້ໂຄງການໄດ້ ຖືກຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ບັນລຸໄດ້ເປົ້າໝາຍທີ່ວາງໄວ້;

**ຫົວໜ້າກົມລ້ຽງສັດ ແລະ ການປະມົງ ອອກຄຳແນະນຳ**

**1. ສຳລັບຂະແໜງລ້ຽງສັດ ແລະ ການປະມົງ ແຂວງ, ນະຄອນຫຼວງວຽງຈັນ:**

(1) ສືບຕໍ່ເຜີຍແຜ່ ເນື້ອໃນ ແລະ ຂັ້ນຕອນຕ່າງໆ ໃຫ້ຜູ້ປະກອບການຢູ່ພາຍໃນແຂວງຂອງຕົນຊາບຢ່າງທົ່ວເຖິງ;

(2) ດຳເນີນການສຶກສາ ຄົ້ນຄ້ວາ, ສຳຫຼວດ ແລະ ປະເມີນ ເງື່ອນໄຂ ຂອງບັນດາຜູ້ປະກອບການຜູ້ທີ່ສົນໃຈ ໃນການຂະຫຍາຍ ຫຼື ສ້າງຟາມລ້ຽງໝູພໍ່ແມ່ພັນ, ການສ້າງ ແລະ ຂະຫຍາຍຟາມລ້ຽງໝູຊີ້ນ ຫຼື ເຈດຈຳນົງການພັດທະນາໂຮງ

ຂ້າສັດ ຢູ່ໃນແຂວງຕົນ ແລະ ສະເໜີຄວາມເປັນໄປໄດ້ ນຳສົ່ງໃຫ້ກົມ ລ້ຽງສັດ ແລະ ການປະມົງພາຍໃນໄລຍະ 1 ເດືອນ ນັບແຕ່ຄຳແນະນຳ ສະບັບນີ້ປະກາດໃຊ້ ;

(3) ການກຳນົດສາຍພັນໝູແມ່ນພັນປະສົມລາກຊວາຍດ,ແລນເຣດແລະ ດູຣອກໂດຍຄາດຄະເນຈຳນວນແມ່ພັນ 12.000 ແມ່ ຢູ່ໃນ 6 ແຂວງທີ່ມີເງື່ອນໄຂ ທ່າແຮງໃນການລ້ຽງໝູຄື: ນະຄອນຫຼວງວຽງຈັນ, ແຂວງອຸດົມໄຊ, ຫລວງພະບາງວຽງຈັນ , ສະຫວັນນະເຂດ ແລະ ແຂວງຈຳປາສັກ. ນອກຈາກນີ້, ບັນດາແຂວງ ອື່ນໆ ທີ່ມີເງື່ອນໄຂ ແລະ ມີຜູ້ສົນໃຈ ກໍ່ສາມາດນຳສະເໜີເຂົ້າຮ່ວມ ກິດຈະກຳ ການລ້ຽງໝູ ພໍ່-ແມ່ພັນໄດ້ເຊັ່ນກັນ;

(4) ໃນຂະບວນການວາງແຜນ ແລະ ປະເມີນຄວາມເປັນໄປໄດ້ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ຄາດຄະເນຈຳນວນ ແລະ ແຫຼ່ງອາຫານໝູທີ່ຕ້ອງການ ໂດຍໃຫ້ຄິດໄລ່ສະເລ່ຍອາຫານ 1 ໂຕນ/ແມ່ພັນໝູ 1 ໂຕ/ປີ ແລະ ສາມາດຄິດໄລ່ອາຫານສຳລັບລ້ຽງໝູຊີ້ນແມ່ນ 270 ກິໂລກຣາມ/ໂຕ/ຮອບ

(5) ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ເປັນເຈົ້າການຂໍການຊີ້ນຳຈາກພະແນກກະສິກຳ ແລະ ປ່າໄມ້ ເພື່ອສະເໜີອົງການປົກຄອງຂັ້ນແຂວງ ແຕ່ງຕັ້ງຄະນະຮັບຜິດຊອບໂຄງການ ເປັນການສະເພາະ, ໂດຍໃຫ້ມີຫົວໜ້າ ຫຼື ຄະນະ ພະແນກເປັນປະທານຊີ້ນຳ, ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງເປັນຮອງ ແລະ ໃຫ້ມີຂະແໜງການອື່ນທີ່ກ່ຽວຂ້ອງເປັນກຳມະການຮ່ວມເພື່ອເຮັດໜ້າທີ່ເປັນເສນາທິການໃຫ້ແກ່ອົງການຂັ້ນເທິງໃນການຂັບເຄື່ອນນະໂຍບາຍ, ພິຈາລະນາບົດວິພາກເສດຖະກິດ-ເຕັກນິກ, ການສະເໜີຂໍລົງທຶນ, ກວດກາຕິດຕາມ, ໃຫ້ຄຳແນະນຳ, ແກ້ໄຂບັນຫາຕ່າງໆ ໃຫ້ແກ່ຜູ້ປະກອບການ ລວມທັງການປະສານງານ ແລະ ລາຍງານຕໍ່ກົມລ້ຽງສັດ ແລະ ການປະມົງເປັນແຕ່ລະໄລຍະ; ການແຕ່ງຕັ້ງຄະນະຮັບຜິດຊອບໃຫ້ສຳເລັດພາຍໃນ 1 ເດືອນ ນັບແຕ່ຄຳແນະນຳສະບັບນີ້ປະກາດໃຊ້;

(6) ເປັນເຈົ້າການກວດກາຄືນ ແລະ ສ້າງບັນຊີລາຍການຟາມ ທີ່ມີຈຸດປະສົງ ຈະເຂົ້າຮ່ວມໂຄງການ ແລະ ພິຈາລະນາໂຄງການສ້າງຕັ້ງຟາມລ້ຽງໝູຂອງພາກເອກະຊົນ, ໃຫ້ກວດກາຄືນບັນດານິຕິກຳທີ່ກະຊວງກະສິກຳ ແລະ ປ່າໄມ້ວາງອອກເປັນຕົ້ນແມ່ນ: ກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ, ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016, ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງກິດຈະການຟາມລ້ຽງສັດໃນ ສປປ ລາວ ສະບັບເລກທີ 0209/ກປ, ລົງວັນທີ 06 ກຸມພາ 2013, ມາດຕະຖານຟາມໝູທີ່ດີ ຂອງສປປ ລາວ;

(7) ແນະນຳຜູ້ປະກອບການໃນການສ້າງວິພາກເສດຖະກິດ-ເຕັກນິກໂດຍໃຫ້ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າກົມລ້ຽງສັດ ແລະ ການປະມົງ ວ່າດ້ວຍການສ້າງບົດວິພາກເສດຖະກິດ-ເຕັກນິກກ່ຽວກັບການລົງທຶນໃນ ທຸລະກິດກ່ຽວກັບ ການລ້ຽງສັດ, ການສັດຕະວະ ແພດ ແລະ ການປະມົງ, ເລກທີ 2358/ກລປ, ລົງວັນທີ 15 ສິງຫາ 2018 ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;

(8) ໃນການພິຈາລະນາ ແລະ ສະເໜີ ກ່ຽວກັບການຂໍນຳເຂົ້າ ແນວພັນໝູ, ໃຫ້ຂະແໜງ ລ້ຽງສັດ ແລະ ການປະມົງ ແນະນຳຜູ້ປະກອບການໃຫ້ປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການນຳເຂົ້າ,ສົ່ງອອກ ແລະ ສົ່ງຜ່ານສັດ, ຜະລິດຕະພັນສັດ ສະບັບເລກທີ 0795/ກປ ລົງວັນທີ 18 ເມສາ 2019 ຢ່າງເຂັ້ມງວດ;

(9) ການຂຶ້ນທະບຽນຟາມເຂົ້າຮ່ວມໂຄງການແມ່ນ ຕ້ອງໄດ້ຂຶ້ນທະບຽນຢູ່ໃນຖານທະບຽນເອກະພາບຢູ່ທີ່ກົມລ້ຽງສັດ ແລະ ການປະມົງ, ສ່ວນຂັ້ນຕອນການຂໍຂຶ້ນທະບຽນ ກົມຈະໄດ້ອອກນິຕິກຳຄຸ້ມຄອງຕ່າງຫາກ;

(10) ສົ່ງເສີມ ຜູ້ປະກອບການລ້ຽງໝູ ສ້າງກຸ່ມ, ສະຫະກອນ ຫຼື ສະມາຄົມຜູ້ລ້ຽງໝູ ໂດຍການສ້າງຕັ້ງຕ້ອງໃຫ້ຖືກຕ້ອງຕາມລະບຽບ ກົດໝາຍ ຂອງ ສປປ ລາວ

(11) ໂດຍພື້ນຖານ ລັດໄດ້ກຳນົດບັນດານະໂຍບາຍເພື່ອສະນັບສະໜູນຜູ້ປະກອບລ້ຽງໝູ ແຕ່ ຜູ້ທີ່ຈະໄດ້ຮັບນະໂຍບາຍຕ້ອງແມ່ນຜູ້ທີ່ຄົບເງື່ອນໄຂ, ໃຫ້ຄວາມຮ່ວມມື, ປະຕິບັດລະບຽບການ ແລະ ໄດ້ຂຶ້ນທະບຽນເຂົ້າ ຮ່ວມໂຄງການຈຶ່ງຈະໄດ້ຮັບນະໂຍບາຍດັ່ງກ່າວ;

(12) ເພື່ອເຮັດໃຫ້ ຜູ້ປະກອບການ ຮັບຊາບ ກ່ຽວກັບ ເນື້ອໃນຂອງໂຄງການ ແລະ ເຂົ້າໃຈບັນດານິຕິກຳ , ວິທີການ ແລະ ຂັ້ນຕອນຕ່າງໆ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ຈັດພິມ ແລະ ເຜີຍແຜ່ ຄຳແນະນຳ ສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງ ໃຫ້ຜູ້ປະກອບການຢູ່ພາຍໃນແຂວງຂອງຕົນຊາບຢ່າງທົ່ວເຖິງ;

**2. ພາກຜູ້ປະກອບການ:**

(1) ຂົນຂວາຍແຫຼ່ງທຶນ, ເຕັກໂນໂລຊີ, ຊອກຄູ່ຮ່ວມທຸລະກິດ ເພື່ອລົງທຶນໃສ່ການລ້ຽງໝູ;

(2) ສະໜອງທຶນ, ແນວພັນ ແລະ ປັດໃຈການຜະລິດທີ່ມີຄຸນນະພາບ ເພື່ອສົ່ງເສີມຊາວກະສິກອນ, ກຸ່ມຜູ້ລ້ຽງດ້ວຍຮູບແບບຕ່າງໆ ຕາມຫຼັກວິຊາການ ແລະ ສອດຄ່ອງກັບມາດຖານຂອງຕະຫຼາດ;

(3) ພັດທະນາລະບົບຟາມ, ລະບົບການຜະລິດທີ່ເປັນຕ່ອງໂສ້ຢ່າງຄົບຊຸດດ້ວຍການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ;

**3. ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.**

**ຫົວໜ້າກົມ**

ກະຊວງກະສິກຳແລະປ່າໄມ້
ກົມລ້ຽງສັດແລະການປະມົງ

ນ. ວິໄລພອນ ວໍລະພົມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

ເລກທີ 3110 . /ກລປ

ນະຄອນຫລວງວຽງຈັນ, ວັນທີ 13 DEC 2021

# ຄຳແນະນຳ

# ກ່ຽວກັບການຈັດຕັ້ງປະຕິບັດໂຄງການຜະລິດງົວເພື່ອການສົ່ງອອກ

ເຖິງ: ທ່ານ ຫົວໜ້າຂະແໜງ ລ້ຽງສັດ ແລະ ການປະມົງ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການ ເຄື່ອນໄຫວຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 3824/ກປ, ລົງວັນທີ 18 ສິງຫາ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ໂຄງການ ຜະລິດງົວເພື່ອການສົ່ງອອກ ສະບັບເລກທີ 1297/ກປ., ລົງວັນທີ 18 ຕຸລາ 2021.

ເພື່ອເຮັດໃຫ້ ການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ໃນການຊຸກຍູ້ ການຜະລິດ ແລະ ປຸງແຕ່ງສິນຄ້າທີ່ມີທ່າແຮງ ແລະ ຕະຫຼາດຮອງຮັບ ເພື່ອການສົ່ງອອກໃຫ້ມີປະສິດຜົນ ແລະ ເປັນຮູບປະທຳ, ກົມລ້ຽງສັດ ແລະ ການປະມົງ ໄດ້ສ້າງໂຄງການ ຜະລິດງົວເພື່ອການສົ່ງອອກຂຶ້ນ ເພື່ອແນ່ໃສ່ ສູ້ຊົນຜະລິດງົວສົ່ງອອກໄປຍັງ ສປ. ຈີນໃຫ້ໄດ້ 50.000 ໂຕຕໍ່ປີ ເພື່ອຊຸກຍູ້ ເສດຖະກິດ ແລະ ສ້າງລາຍຮັບເງິນຕາຕ່າງປະເທດໃຫ້ເພີ່ມຂຶ້ນ. ໃນນີ້, ໂຄງການດັ່ງກ່າວ ໄດ້ກຳນົດ 3 ວຽກຈຸດສຸມເພື່ອໃຫ້ຜູ້ ປະກອບການ ຫຼືນັກລົງທຶນຜູ້ທີ່ສົນໃຈ ເຂົ້າຮ່ວມ ຄື: 1) ສ້າງຟາມພໍ່-ແມ່ພັນງົວ ຢ່າງນ້ອຍ 208 ຟາມ ມີແມ່ພັນດີ 62.500 ແມ່ ແລະ 2) ສ້າງ ແລະ ຂະຫຍາຍ ຟາມລ້ຽງງົວຢ່ານົມ 52.000 ໂຕ/ປີ (ລ້ຽງ 14 ເດືອນ) ເພື່ອໃຫ້ໄດ້ໂຄງຮ່າງ ກ່ອນນຳໄປ ລ້ຽງທອມ ແລະ 3) ສ້າງ ແລະ ຂະຫຍາຍ ຟາມລ້ຽງງົວທອມຂະໜາດ 200ໂຕ/ປີ ຢ່າງນ້ອຍ 250 ຟາມ; ສະນັ້ນເພື່ອເຮັດໃຫ້ ໂຄງການໄດ້ ຖືກຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ບັນລຸໄດ້ເປົ້າໝາຍທີ່ວາງໄວ້.

## ຫົວໜ້າກົມລ້ຽງສັດ ແລະ ການປະມົງ ອອກຄຳແນະນຳ

**1. ສຳລັບຂະແໜງລ້ຽງສັດ ແລະ ການປະມົງແຂວງ, ນະຄອນຫຼວງ:**

(1) ສືບຕໍ່ເຜີຍແຜ່ເນື້ອໃນ ແລະ ຂັ້ນຕອນຕ່າງໆ ໃຫ້ຜູ້ປະກອບການຢູ່ພາຍໃນແຂວງຂອງຕົນຊາບຢ່າງທົ່ວເຖິງ;

(2) ດຳເນີນການສຶກສາ ຄົ້ນຄ້ວາ, ສຳຫຼວດ ແລະ ປະເມີນ ເງື່ອນໄຂ ຂອງບັນດາຜູ້ປະກອບການຜູ້ທີ່ສົນໃຈ ໃນການ ຂະຫຍາຍຟາມລ້ຽງງົວພໍ່-ແມ່ພັນ ຜະລິດລູກ, ການສ້າງ ແລະ ຂະຫຍາຍຟາມລ້ຽງງົວຢ່ານົມ ຫາ ງົວເຕັມໂຄງ ຫຼື ເຈດ ຈຳນົງການລ້ຽງງົວທອມ ໂດຍສະເໜີຄວາມເປັນໄປໄດ້ແລ້ວ ນຳສົ່ງໃຫ້ກົມ ລ້ຽງສັດ ແລະ ການປະມົງພາຍໃນໄລຍະ 1 ເດືອນ ນັບແຕ່ຄຳແນະນຳ ສະບັບນີ້ປະກາດໃຊ້ .

(3) ການກຳນົດສາຍພັນງົວ ແມ່ນ ງົວລູກປະສົມ ທີ່ໄດ້ຈາກແມ່ພັນ 2 ສາຍເລືອດ ຕົວຢ່າງ: ພື້ນເມືອງ+ບຣາມັນແດງ ຫຼື ພື້ນເມືອງ + ເຣດເຊັນດີ້ ທີ່ໄດ້ປະສົມກັບນ້ຳເຊື້ອ ຫຼື ງົວພໍ່ພັນປັບປຸງ ຊາໂລເຣ ຫຼື ອັງກັສ ຫຼື ງົວຊີ້ນພັນດີ ອື່ນໆ ເພື່ອໃຫ້ໄດ້ລູກງົວມີສາຍເລືອດປະສົມພັນປັບປຸງ 75% ເພື່ອຈຳໜ່າຍໃຫ້ແກ່ຊາວກະສິກອນນຳໄປລ້ຽງເປັນງົວທອມ.

(4) ໃນຂະບວນການວາງແຜນ ແລະ ປະເມີນຄວາມເປັນໄປໄດ້ໃຫ້ປະເມີນຄວາມຕ້ອງ ການອາຫານເພື່ອລ້ຽງງົວ ພໍ່-ແມ່ພັນຜະລິດລູກໂດຍໃຫ້ຄິດໄລ່ປະລິມາຫຍ້າສົດ 50 ກິໂລ/ໂຕ/ວັນ, ສຳລັບງົວຢ່ານົມ 20 ກິໂລ/ໂຕ/ວັນ ແລະ ງົວທອມ 25 ກິໂລ/ໂຕ/ວັນ ໂດຍພື້ນທີ່ປູກຫຍ້າໃຫ້ກຳນົດເອົາເກນການປູກຫຍ້າເນເປຍ ຫຼື ຫຍ້າຈຸນຊາວ ໂດຍໃຫ້ຄິດໄລ່ 100 ໂຕນ ຕໍ່ເຮັກຕາຕໍ່ປີ ຫຼື ລ້ຽງງົວພໍ່-ແມ່ພັນ ແມ່ນຕ້ອງມີທົ່ງຫຍ້າ ລ້ຽງປ່ອຍຄຸນນະພາບດີ. ນອກຈາກນີ້, ການລ້ຽງງົວຢ່ານົມ ແລະ ງົວທອມ ແມ່ນ ໃຫ້ປະເມີນຄວາມຕ້ອງການສາລີ ແລະ ມັນຕົ້ນເພື່ອເປັນອາຫານເສີມ ໂດຍຄິດໄລ່ຄວາມຕ້ອງການ ສາລີ 0,136 ກລ/ໂຕ/ວັນ ສຳລັບງົວຢ່ານົມ ແລະ 0,63 ກລ/ໂຕ/ວັນ ສຳລັບງົວທອມ ແລະ ຄວາມຕ້ອງການມັນຕົ້ນ ສຳລັບງົວຢ່ານົມ ແມ່ນ 0,5 ກິໂລ/ໂຕ/ວັນ ແລະ ງົວທອມແມ່ນ 2,5 ກິໂລ/ໂຕ/ວັນ, ສ່ວນພື້ນທີ່ປູກສາລີ ທີ່ຕ້ອງການໃຫ້ຄິດໄລ່ 5,4 ໂຕນຕໍ່ເຮັກຕາຕໍ່ປີ ແລະ ພື້ນທີ່ປູກມັນຕົ້ນໃຫ້ຄິດໄລ່ ມັນຕົ້ນແຫ້ງ 4,7 ໂຕນ ຕໍ່ເຮັກຕາຕໍ່ປີ.

(5) ເປັນເຈົ້າການຂໍການຊີ້ນຳຈາກພະແນກກະສິກຳ ແລະ ປ່າໄມ້ ເພື່ອສະເໜີເຖິງອົງການປົກຄອງຂັ້ນແຂວງ ແຕ່ງຕັ້ງຄະນະຮັບຜິດຊອບໂຄງການຜະລິດງົວເພື່ອການສົ່ງອອກ ເປັນການສະເພາະ, ໂດຍໃຫ້ມີຫົວໜ້າ ຫຼື ຄະນະພະແນກເປັນປະທານຊີ້ນຳ, ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງເປັນຮອງ ແລະ ໃຫ້ມີຂະແໜງ ການອື່ນທີ່ກ່ຽວຂ້ອງເປັນກຳມະການຮ່ວມ ເພື່ອເຮັດໜ້າທີ່ເປັນເສນາທິການໃຫ້ແກ່ອົງການຂັ້ນເທິງໃນການຂັບເຄື່ອນນະໂຍບາຍພິຈາລະນາບົດວິພາກເສດຖະກິດ-ເຕັກນິກ, ການສະເໜີຂໍລົງທຶນ, ກວດກາຕິດຕາມ, ໃຫ້ຄຳແນະນຳ, ແກ້ໄຂບັນ ຫາຕ່າງໆ ໃຫ້ແກ່ຜູ້ປະກອບການ ລວມທັງການປະສານງານ ແລະ ລາຍງານຕໍ່ກົມລ້ຽງສັດ ແລະ ການປະມົງເປັນ ແຕ່ລະໄລຍະ; ການແຕ່ງຕັ້ງຄະນະຮັບຜິດຊອບໃຫ້ສຳເລັດພາຍໃນ 1 ເດືອນ ນັບແຕ່ຄຳແນະນຳສະບັບນີ້ປະກາດໃຊ້.

(6) ເປັນເຈົ້າການກວດກາຄືນ ແລະ ສ້າງບັນຊີລາຍການຟາມ ທີ່ມີຈຸດປະສົງ ຈະເຂົ້າຮ່ວມໂຄງການ ແລະ ພິຈາລະນາໂຄງການສ້າງຕັ້ງຟາມລ້ຽງງົວ ຂອງພາກເອກະຊົນ, ໃຫ້ກວດກາຄືນບັນດານິຕິກຳທີ່ກະຊວງກະສິກຳ ແລະ ປ່າໄມ້ວາງອອກເປັນຕົ້ນແມ່ນ: ກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ, ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016, ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງກິດຈະການຟາມລ້ຽງສັດໃນ ສປປ ລາວ ສະບັບເລກທີ 0209/ກປ, ລົງວັນທີ 06 ກຸມພາ 2013 ແລະ ມາດຕະຖານຟາມງົວຊີ້ນຂອງ ສປປ ລາວ ມກປ.ລປ.2018.00003.

(7) ແນະນຳ ຜູ້ປະກອບການ ສ້າງບົດວິພາກເສດຖະກິດ-ເຕັກນິກ ໂດຍໃຫ້ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າກົມລ້ຽງສັດ ແລະ ການປະມົງ ວ່າດ້ວຍການສ້າງບົດວິພາກເສດຖະກິດ-ເຕັກນິກກ່ຽວກັບການລົງທຶນໃນ ທຸລະກິດກ່ຽວກັບ ການລ້ຽງສັດ, ການສັດຕະວະ ແພດ ແລະ ການປະມົງ, ເລກທີ 2358/ກລປ, ລົງວັນທີ 15 ສິງຫາ 2018 ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

(8) ໃນການພິຈາລະນາ ແລະ ສະເໜີ ກ່ຽວກັບການຂໍນຳເຂົ້າ ແນວພັນງົວ, ໃຫ້ຂະແໜງ ລ້ຽງສັດ ແລະ ການປະມົງແນະນຳ ຜູ້ປະກອບການໃຫ້ປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການນຳເຂົ້າ,ສົ່ງອອກ ແລະ ສົ່ງຜ່ານສັດ , ຜະລິດຕະພັນສັດ ສະບັບເລກທີ 0795/ກປ ລົງວັນທີ 18 ເມສາ 2019 ຢ່າງເຂັ້ມງວດ;

(9) ການຂຶ້ນທະບຽນຟາມເຂົ້າຮ່ວມໂຄງການ ແມ່ນ ຕ້ອງໄດ້ຂຶ້ນທະບຽນຢູ່ໃນຖານທະບຽນເອກະພາບຢູ່ທີ່ກົມລ້ຽງສັດ ແລະ ການປະມົງ, ສ່ວນຂັ້ນຕອນການຂໍຂຶ້ນທະບຽນ ກົມຈະໄດ້ອອກນິຕິກຳຄຸ້ມຄອງ ຕ່າງຫາກ;

(10) ສົ່ງເສີມ ຜູ້ປະກອບການງົວ ສ້າງກຸ່ມ, ສະຫະກອນ ຫຼື ສະມາຄົມຜູ້ລ້ຽງງົວ ໂດຍການສ້າງຕັ້ງຕ້ອງໃຫ້ຖືກຕ້ອງ ຕາມລະບຽບ ກົດໝາຍ ຂອງ ສປປ ລາວ

(11) ໂດຍພື້ນຖານ ລັດໄດ້ກຳນົດ ບັນດານະໂຍບາຍ ເພື່ອສະໜັບສະໜູນຜູ້ປະກອບການ ແຕ່ ຜູ້ທີ່ຈະໄດ້ຮັບນະໂຍບາຍ ຕ້ອງແມ່ນຜູ້ທີ່ຄົບເງື່ອນໄຂ, ໃຫ້ຄວາມຮ່ວມມື, ປະຕິບັດລະບຽບການ ແລະ ໄດ້ຂຶ້ນທະບຽນເຂົ້າ ຮ່ວມໂຄງການຈຶ່ງ ຈະໄດ້ຮັບນະໂຍບາຍດັ່ງກ່າວ.

(12) ເພື່ອເຮັດໃຫ້ຜູ້ປະກອບການຮັບຊາບ ກ່ຽວກັບ ເນື້ອໃນຂອງໂຄງການ ແລະ ເຂົ້າໃຈບັນດານິຕິກຳ , ວິທີການ ແລະ ຂັ້ນຕອນຕ່າງໆ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ຈັດພິມ ແລະ ເຜີຍແຜ່ ຄຳແນະນຳ ສະບັບນີ້ ແລະ ນິຕິກຳທີ່ ກ່ຽວຂ້ອງ ໃຫ້ຜູ້ປະກອບການຢູ່ພາຍໃນແຂວງຂອງຕົນຊາບຢ່າງທົ່ວເຖິງ;

**2. ສຳລັບຜູ້ປະກອບການ:**

(1) ຂົນຂວາຍແຫຼ່ງທຶນ, ເຕັກໂນໂລຊີ, ຊອກຄູ່ຮ່ວມທຸລະກິດ ຢູ່ປະເທດຄູ່ຄ້າ ເພື່ອລົງທຶນໃສ່ການຜະລິດງົວ;

(2) ສະໜອງທຶນ, ແນວພັນ ແລະ ປັດໃຈການຜະລິດທີ່ມີຄຸນນະພາບ ເພື່ອສົ່ງເສີມປະຊາຊົນ, ກຸ່ມຜູ້ລ້ຽງງົວດ້ວຍຫຼາຍ ຮູບແບບການຮ່ວມມື ເຊັ່ນ: 2+3, 1+4 **ຫຼື ສຳປະທານທີ່ດິນນຳລັດ ໂດຍປະຕິບັດຕາມລະບຽບການ** ແລະ ກົດໝາຍທີ່ກ່ຽວຂ້ອງ;

(3) ພັດທະນາລະບົບຟາມ, ລະບົບການຜະລິດທີ່ເປັນຕ່ອງໂສ້ຄົບຊຸດດ້ວຍການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ;

(4) ສ້າງເຄືອຂ່າຍການຕະຫຼາດໃຫ້ກວ້າງຂວາງທັງພາຍໃນພາກພື້ນ ແລະ ສາກົນ ພ້ອມດ້ວຍປະຕິບັດຕາມ ມາດຕະຖານການຜະລິດ ແລະ ຕະຫຼາດຂອງປະເທດຄູ່ຄ້າ;

**3. ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.**

**ຫົວໜ້າກົມ**

ທ. ວິໄລພອນ ວໍລະພົມ